ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 1110/ກປ.

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2008

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍ ໂຄງການປະກອບກົງຈັກການຈັດຕັ້ງ ຂອງ ໂຄງການ ຈັດສັນປ່າຜະລິດ ແລະ ພັດທະນາ ຊົນນະບົດ ( SUFORD)

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10/5/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ຜົນການປຶກສາຫາລື ກ່ຽວກັບ ໂຄງປະກອບກົງຈັກການຈັດຕັ້ງຂອງໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດ ຄັ້ງວັນທີ່ 24/07/2008.
- ອີງຕາມໃບສະເໜີ ຂອງ ກົມຈັດຕັ້ງ ແລະ ພະນັກງານ. ສະບັບເລກທີ 1396/ກຈພ, ຄັ້ງວັນທີ 29/08/2008.
- ອີງຕາມການເຫັນດີ ເປັນເອກະພາບຂອງ ກອງປະຊຸມ ຄະນະປະຈຳພັກ ກະຊວງ ຄັ້ງວັນທີ 28/08/2008.

## ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ ດັ່ງນີ້ :

ມາດຕາ1. ເຫັນດີຍົກຍ້າຍຫ້ອງການປະສານງານໂຄງການ(NPMO)ຂອງໂຄງການທີ່ຢູ່ກອງສົ່ງເສີມກະສິກຳ ແລະ ປ່າໄມ້ໄປຂຶ້ນກັບກົມປ່າໄມ້ ເປັນຜູ້ຄຸ້ມຄອງ ແລະ ຮັບຜິດຊອບລົງລາຍເຊັນ ສຸດທ້າຍໃນການບໍລິຫານໂຄງການຕໍ່ໄປ. ສ່ວນວຽກພັດທະນາຊົນນະບົດ (ວຽກVD) ແມ່ນໃຫ້ຮັກສາໄວ້ ຢູ່ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ເປັນຜູ້ສືບຕໍ່ຄຸ້ມຄອງໄປ.

ມາດຕາ 2. ການບໍລິຫານໂຄງການ, ຢູ່ໃນຂັ້ນແຂວງ ເຫັນດີມອບວຽກບໍລິຫານໂຄງການ, ວຽກງານຈັດສັນປ່າຜະລິດ, ວຽກຄຸ້ມຄອງ ແລະ ພັດທະນາປ່າໄມ້ ໃຫ້ຂະແໜງການປ່າໄມ້ ເປັນຜູ້ຮັບຜິດຊອບ, ສ່ວນວຽກພັດທະນາຊົນນະບົດໃນໄລຍະທີ່ບໍ່ທັນມີຂະແໜງສົ່ງເສີມ ກະສິກຳ ແລະ ປ່າໄມ້ຂັ້ນແຂວງນັ້ນແມ່ນມອບໃຫ້ຂະແໜງແຜນການ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ຮັບຜິດຊອບກ່ອນ.

ມາດຕາ 3. ການຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ຂັ້ນເມືອງແມ່ນໃຫ້ປະຕິບັດຕາມພາລະບົດບາດຄືເກົ່າ, ໝາຍວ່າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຫົວໜ່ວຍຮັບຜິດຊອບຈັດຕັ້ງປະຕິບັດຕົວຈິງ.

ມາດຕາ 4. ກົມຈັດຕັ້ງ ແລະ ພະນັກງານ, ກົມປ່າໄມ້, ກອງລົ່ງເສີມກະສິກຳ ແລະ ປ່າໄມ້,ບັນດາກົມ ແລະ ທຽບເທົ່າອ້ອມຂ້າງກະຊວງ, ພະແນກກະສິກຳ ແລະ ປ່າໄມ້, ແລະ ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ຜທ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້

ລັດຖະມົນຕີ

ດຣ. ຕີ ພົມມະສັກ

ບ່ອນນຳສົ່ງ :

| | |
|---|---|
| - ຄະນະນຳກະຊວງ | 1 ສະບັບ |
| - ຫ້ອງການ ກະຊວງ ກປ | 1 ສະບັບ |
| - ກົມຈັດຕັ້ງ ແລະ ພະນັກງານ | 1 ສະບັບ |
| - ກົມ ປ່າໄມ້ | 1 ສະບັບ |
| - ບັນດາກົມ, ກອງ, ແລະ ສະຖາບັນ | 1 ສະບັບ |
| - ບັນດາ ພະແນກ ກປ ປະຈຳແຂວງ | 1 ສະບັບ |
| - ເກັບມ້ຽນ | 1 ສະບັບ |